swisscontact

SWISS FOUNDATION FOR TECHNICAL COOPERATION



# ຂໍເຊີນ ພາກສ່ວນ ບັນດາສະມາຄົມ ແລະ ອົງການຈັດຕັ້ງ ທີ່ມີຄວາມສົນໃຈ ເຂົ້າຮ່ວມ ເປັນຄູ່ຮ່ວມງານ ຂອງ ໂຄງການ ຝຶກອົບຮົມວິຊາຊີບ ແລະ ສະໜັບສະໜູນການມີວຽກເຮັດງານທຳ (VTESS).

## ໃນການຈັດຕັ້ງປະຕິບັດ ວົງຈອນການໃຫ້ຄຳປຶກສາດ້ານການມີວຽກເຮັດງານທຳ

ໄລຍະເວລາຂອງ**ສັນຍາການຮ່ວມມື**: **ຢ່າງໜ້ອຍ 12 ຫາ 14 ເດືອນ** (ເລີ່ມແຕ່ຕົ້ນປີ 2025 ຫາ ຕົ້ນປີ 2026);

ພື້ນທີ່**ເປົ້າໝາຍຂອງໂຄງການ**: ນະຄອນຫຼວງວຽງຈັນ, ແຂວງອຸດົມໄຊ, ແຂວງໄຊຍະບູລີ, ແຂວງຊຽງຂວາງ, ແຂວງຄຳມ່ວນ ແລະ ແຂວງສາລະວັນ, ພາກສ່ວນ ບັນດາສະມາຄົມ ແລະ ອົງການຈັດຕັ້ງ ທີ່ສົນໃຈສະໝັກຈະຕ້ອງນອນໃນແຂວງເປົ້າໝາຍ ທີ່ກ່າວມາຂ້າງເທິງ.

ໂຄງການຝຶກອົບຮົມວິຊາຊີບ ແລະ ສະໜັບສະໜູນການມີວຽກເຮັດງານທຳ (VTESS) ໄລຍະທີ 2 ແມ່ນເລີ່ມແຕ່ ເດືອນທັນວາ 2023 ຫາ ເດືອນພະຈິກ 2027, ມີ ເປົ້າໝາຍເລັງໃສ່ເພື່ອສະໜອງການຝຶກອົບຮົມວິຊາຊີບ ທີ່ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ໂດຍສຸມໃສ່ກຸ່ມເປົ້າໝາຍທີ່ເປັນໄວໜຸ່ມຜູ້ດ້ອຍໂອກາດທີ່ ຮຽນຈົບຊັ້ນປະຖົມ ຫຼື ຈົບຊັ້ນມັດທະຍົມຕອນຕົ້ນ, ທີ່ມີອາຍຸລະຫວ່າງ 15-35 ປີ. ເປົ້າໝາຍແມ່ນເພື່ອໃຫ້ເຂົາເຈົ້າມີວຽກເຮັດງານທຳ, ປະກອບອາຊີບດ້ວຍຕົນເອງ ຫຼື ກັບຄືນເຂົ້າສູ່ລະບົບການສຶກສາ

ໂດຍຜ່ານວົງຈອນການໃຫ້ຄໍາປຶກສາດ້ານການມີວຽກເຮັດງານທໍາ. ເຊິ່ງກຸ່ມເປົ້າໝາຍດັ່ງກ່າວ ຈະໄດ້ເຂົ້າຮ່ວມວົງຈອນການໃຫ້ຄໍາປຶກສາ ເປັນໄລຍະເວລາ ທັງໝົດ 9 ເດືອນ.

ສະນັ້ນ, ໂຄງການ VTESS ກໍາລັງຊອກຫາ ຄູ່ຮ່ວມງານ ທີ່ມີຄວາມສົນໃຈຮ່ວມມືໃນການດໍາເນີນກິດຈະກໍາ ໂດຍການມອບໝາຍ/ແຕ່ງຕັ້ງພະນັກງານທີ່ມີເງື່ອນໄຂເໝາະສົມ ສະໝັກເປັນຜູ້ໃຫ້ຄໍາປຶກສາດ້ານການມີວຽກເຮັດງານທໍາ ເພື່ອເຂົ້າຮ່ວມຝຶກອົບຮົມ "ການເປັນຜູ້ໃຫ້ຄໍາປຶກສາ"

**ການມີ ຄູ່ຮ່ວມງານ ແລະ ຜູ້ໃຫ້ຄໍາປຶກສາ** ທີ່ມີຄຸນສົມບັດທີ່ເໝາະສົມ ແມ່ນເປັນປັດໄຈທີ່ສໍາຄັນຕໍ່ຜົນສໍາເລັດ ຂອງການຈັດຕັ້ງປະຕິບັດ ວົງຈອນການໃຫ້ຄໍາປຶກສາດ້ານການມີວຽກເຮັດງານທໍາ ເຊິ່ງໃນປີ 2025 ທາງໂຄງການມີແຜນຝຶກອົບຮົມການເປັນ**ຜູ້ໃຫ້ຄໍາປຶກສາ ຊຸດໃໝ່** ຈໍານວນ 20-25 ທ່ານ, ພາຍໃນ 6 ແຂວງເປົ້າໝາຍ ຂອງ ໂຄງການ, ໃນນັ້ນ ຜູ້ໃຫ້ຄໍາປຶກສາແຕ່ລະທ່ານ ຈະໄດ້ຮັບຜິດຊອບໃນການໃຫ້ຄໍາປຶກສາດ້ານການມີວຽກເຮັດງານທໍາ ໃຫ້ແກ່ໄວໜຸ່ມກຸ່ມເປົ້າໝາຍ ຢ່າງໜ້ອຍ 12 ຄົນ/ກຸ່ມ, ທາງໂຄງການໃຫ້ຄວາມສໍາຄັນຕໍ່ກັບຄວາມສົມດຸນ (ສັດສ່ວນ ເພດຍິງ-ຊາຍ, ຊົນເຜົ່າ) ໃນກຸ່ມ ຂອງ ຜູ້ໃຫ້ຄໍາປຶກສາ.

**ການຝຶກອົບຮົມ** ການເປັນຜູ້ໃຫ້ຄໍາປຶກສາດ້ານການມີວຽກເຮັດງານທໍາ ແມ່ນໄດ້ແບ່ງອອກເປັນ 5 ຄັ້ງ, ສະເລ່ຍແຕ່ລະຄັ້ງ ປະມານ 4-5 ວັນ. ພາຍຫຼັງສໍາເລັດການຝຶກອົບຮົມແຕ່ລະຄັ້ງ ຜູ້ໃຫ້ຄໍາປຶກສາ ຈະໄດ້ນໍາເອົາຄວາມຮູ້ ແລະ ທັກສະດັ່ງກ່າວ ນໍາໃຊ້ເຂົ້າໃນການດໍາເນີນ ການໃຫ້ຄໍາປຶກສາ ແກ່ໄວໜຸ່ມກຸ່ມເປົ້າໝາຍ.



ການຝຶກອົບຮົມ "**ການເປັນຜູ້ໃຫ້ຄໍາປຶກສາ**



**ການໃຫ້ຄໍາປຶກສາເປັນກຸ່ມ ໃຫ້ແກ່ກຸ່ມເປົ້າໝາຍ**

## ໄລຍະເວລາ ການຮັບສະໝັກ:

| | |
|---|---|
| 1. | **ເປີດຮັບສະໝັກ ເລີ່ມແຕ່ວັນທີ** 11 ທັນວາ, 2024 **ແລະ ປິດຮັບສະໝັກ ໃນວັນທີ** 10 ມັງກອນ, 2025 |
| 2. | **ສອບຖາມລາຍລະອຽດ** ແລະ **ສົ່ງ ແບບຟອມສະໝັກ** ມາຍັງໂຄງການ VTESS ຕາມລາຍລະ ອຽດລຸ່ມນີ້:<br>+85620 9590 3747 (ນາງ ແສງມະນີ ສີສຸດທິຈັກ)<br>+85620 5690 4769 (ນາງ ພິຈິດຕາ ພະເມືອງ)<br>ຫຼື ສາມາດສົ່ງແບບຟອມສະໝັກຜ່ານມາທາງອີເມວ soudsaichay.baudrez@swisscontact.org<br>*ໝາຍເຫດ: ກະລຸນາຕິດຕໍ່ ຕາມມື້ ແລະ ໂມງລັດຖະການ* |

swisscontact

# ຂໍ້ແນະນຳກ່ຽວກັບການປະກອບແບບຟອມສະໝັກ

## ຂັ້ນຕອນການສະໝັກ

ພາກສ່ວນບັນດາສະມາຄົມ ແລະ ອົງການຈັດຕັ້ງ ທີ່ມີເງື່ອນໄຂໃນການສະໝັກເຂົ້າຮ່ວມເປັນຄູ່ຮ່ວມງານ ໃນການຈັດຕັ້ງປະຕິບັດກິດຈະກຳ ຮ່ວມກັບໂຄງການ ລວມມີ ອົງການຈັດຕັ້ງພາກລັດ, ເອກະຊົນ, **ບັນດາ ສະມາຄົມ (NPAs) ແລະ ອົງການຈັດຕັ້ງສາກົນ (INGOs).**

## ເງື່ອນໄຂ ລວມມີດັ່ງນີ້:

ເງື່ອນໄຂ ສຳລັບພາກສ່ວນບັນດາສະມາຄົມ ແລະ ອົງການຈັດຕັ້ງ **ທີ່ຈະສະໝັກ ເປັນຄູ່ຮ່ວມງານ:**

1. ມີປະສົບການ ເຮັດວຽກກັບໄວໜຸ່ມກຸ່ມຜູ້ດ້ອຍໂອກາດ;
2. ມີປະສົບການ ໃນການດຳເນີນກິດຈະກຳໂຄງການ/ກ່ຽວກັບການຝຶກອົບຮົມວິຊາຊີບ, ການແນະນຳດ້ານອາຊີບ ແລະ ການສະໜັບສະໜູນການຊອກວຽກ;
3. ມີສະຖານທີ່ ທີ່ເໝາະສົມ (ເຊັ່ນ: ຫ້ອງປະຊຸມ ຫຼື ຫ້ອງໃຫ້ຈັດກິດຈະກຳ) ເພື່ອນຳໃຊ້ເຂົ້າໃນການຈັດກິດຈະກຳຂອງວົງຈອນການໃຫ້ຄຳປຶກສາ ສະເລ່ຍສາມາດຮອງຮັບຜູ້ເຂົ້າຮ່ວມໄດ້ປະມານ 20 ຄົນ;
4. ມີພະນັກງານ ຜູ້ທີ່ມີເງື່ອນໄຂເໝາະສົມ ເພື່ອມອບໝາຍ ໃຫ້ເຂົ້າຮ່ວມການຝຶກອົບຮົມ ການເປັນຜູ້ໃຫ້ຄຳປຶກສາ ແລະ ດຳເນີນ ວົງຈອນການໃຫ້ຄຳປຶກສາ ຮ່ວມກັບ ໄວໜຸ່ມກຸ່ມເປົ້າໝາຍ, ພ້ອມກັນນັ້ນ ຕ້ອງສາມາດຈັດສັນເວລາ ໃຫ້ແກ່ພະນັກງານຜູ້ຖືກມອບໝາຍ ໃນການເຮັດວຽກ ເປັນຜູ້ໃຫ້ຄຳປຶກສາ.

ເງື່ອນໄຂ ຜູ້ຈະສະໝັກ **ເປັນຜູ້ໃຫ້ຄຳປຶກສາ**:

1. ມີອາຍຸ ລະຫວ່າງ 25 ຫາ 45 ປີ.
2. ມີຄວາມຮູ້ ແລະ ປະສົບການ ໃນການເຮັດວຽກກັບໄວໜຸ່ມ ແລະ ກຸ່ມຜູ້ດ້ອຍໂອກາດ (ເຊັ່ນ: ວຽກການສຶກສອນ, ວຽກພັດທະນາໄວໜຸ່ມ, ວຽກພັດທະນາຊຸມຊົນ, ວຽກສັງຄົມສົງເຄາະ) ຫຼື ວຽກອາສາສະໝັກອື່ນໆ ທີ່ກ່ຽວຂ້ອງ;
3. ມີປະສົບການເຮັດວຽກ ຫຼື ການປະສານງານ ກັບ ພາກທຸລະກິດ;
4. ເປັນພະນັກງານວິຊາການ;
5. ສາມາດຈັດສັນເວລາ ໃນການດຳເນີນກິດຈະກຳ ວົງຈອນການໃຫ້ຄຳປຶກສາ ໃຫ້ແກ່ກຸ່ມເປົ້າໝາຍໄດ້;
6. ສາມາດເຂົ້າຮ່ວມຝຶກອົບຮົມ ການເປັນຜູ້ໃຫ້ຄຳປຶກສາ ຕະຫຼອດໄລຍະການຮ່ວມມື ກັບໂຄງການ;
7. ເວົ້າ ແລະ ຂຽນພາສາລາວໄດ້ຢ່າງຄ່ອງແຄ້ວ, ຖ້າ ສາມາດເວົ້າພາສາຊົນເຜົ່າໃດໜຶ່ງໃນທ້ອງຖິ່ນໄດ້ຍິ່ງເປັນການດີ.

## ວິທີປະກອບແບບຟອມສະໝັກ ແລະ ສົ່ງສະໝັກ:

ແບບຟອມສະໝັກປະກອບດ້ວຍ 2 ແບບຟອມຄື: **ແບບຟອມທີ 1** ແມ່ນ ສຳລັບ **ອົງການຈັດຕັ້ງທີ່ສົນໃຈສະໝັກເປັນຄູ່ຮ່ວມງານ** ແລະ **ແບບຟອມທີ 2** ແມ່ນສຳລັບ **ຜູ້ສົນໃຈສະໝັກ ເປັນຜູ້ໃຫ້ຄຳປຶກສາ**.

1. ອົງການຈັດຕັ້ງ ຕ້ອງໄດ້ຕື່ມລາຍລະອຽດໃສ່ແບບຟອມ **ສຳລັບສະໝັກເປັນຄູ່ຮ່ວມງານ**, ໃຫ້ເບິ່ງລາຍລະອຽດ ແລະ ໂຫຼດເອົາແບບຟອມສະໝັກ ໃນລິ້ງນີ້ **ແບບຟອມທີ 1**;
2. ຜູ້ສົນໃຈສະໝັກ ເປັນຜູ້ໃຫ້ຄຳປຶກສາ ຕ້ອງໄດ້ຕື່ມລາຍລະອຽດໃສ່ແບບຟອມ **ສຳລັບສະໝັກ ເປັນຜູ້ໃຫ້ຄຳປຶກສາ ,** ໃຫ້ເບິ່ງລາຍລະອຽດ ແລະ ໂຫຼດເອົາແບບຟອມສະໝັກ ໃນລິ້ງນີ້ **ແບບຟອມທີ 2**;
3. ພະນັກງານ ທີ່ມີຄວາມສົນໃຈສະໝັກເປັນ ຜູ້ໃຫ້ຄຳປຶກສາ ຈະຕ້ອງປະກອບແບບຟອມຂອງໃຜລາວ ແລະ ແບບຟອມດຽວເທົ່ານັ້ນ (ໃນກໍລະນີ ໃນສະມາຄົມ ຫຼື ອົງການຈັດຕັ້ງໜຶ່ງ ຫາກມີຫຼາຍກວ່າ 1 ຄົນສະໝັກ).